ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===== xxxx =====------

2024

ກະຊວງ ອຸດສາຫະກຳ ແລະການຄ້າ ເລກທີ /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 12 OCT 2010

# ລະບຽບ ວ່າດ້ວຍ ການຄຸ້ມຄອງທຶນເງິນກູ້ ເພື່ອເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດ

- ອີງຕາມ ດຳລັດ ສະບັບເລກທີ 188/ນຍ, ລົງວັນທີ 7/8/2006, ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະການຄ້າ.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງຄັງແຮເຂົ້າແຫ່ງຊາດ, ສະບັບເລກທີ 96/ນຍ, ລົງວັນທີ 23/09/08
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ, ສະບັບເລກທີ 1093/ຄລບ, ລົງວັນທີ 24/06/09.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະການຄ້າ ອອກລະບຽບ ດັ່ງນີ້:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

- ລະບຽບສະບັບນີ້ວາງອອກ ເພື່ອເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງຂອງລັດ ໃນການຄົ້ນຄ້ວາພິຈາລະນາຮັບຮອງເອົາບັນດາຫົວໜ່ວຍທຸລະກິດທີ່ຈະນຳໃຊ້ທຶນເງິນກູ້ ເພື່ອເປັນທຶນໝູນວຽນເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດ ໃຫ້ຖືກຕາມທິດທາງແຜນການຂອງລັດຖະບານ ເພື່ອຮັບປະກັນການນຳໃຊ້ທຶນໃຫ້ມີປະສິດທິຜົນດີ ເປັນຕົ້ນແມ່ນການປ່ອຍກູ້, ການຄຸ້ມຄອງ ແລະນຳໃຊ້ທຶນໃຫ້ຖືກເປົ້າໝາຍ, ບໍ່ໃຫ້ທຶນບົກແຫ້ງ ແລະຕົກເຮ່ຍເສຍຫາຍ.
- ເພື່ອເປັນການສົ່ງເສີມການຜະລິດເຂົ້າໃຫ້ມີການຂະຫຍາຍຕົວ ທາງດ້ານປະລິມານ ແລະຄຸນນະພາບ, ຮັບປະກັນຄວາມມີສະຖຽນລະພາບດ້ານເຂົ້າກິນ ໃຫ້ສາມາດເປັນສິນຄ້າສົ່ງອອກເທື່ອລະກ້າວ.

### ມາດຕາ 2. ລະດັບຄາດໝາຍ

ເພື່ອບັນລຸເປົ້າໝາຍຕາມທິດທາງນະໂຍບາຍທີ່ລັດຖະບານວາງອອກ ໃຫ້ປະກົດຜົນປັນຈິງ, ຮັບປະກັນສະຖຽນລະພາບທາງດ້ານເຂົ້າກິນໃຫ້ມີສ່ວນແຮໄວ້ ແລະສາມາດສົ່ງອອກ ເພື່ອເປັນການປະກອບສ່ວນເຮັດໃຫ້ປະເທດເຮົາຫຼຸດພົ້ນຈາກຄວາມດ້ອຍພັດທະນາເທື່ອລະກ້າວ.

**ມາດຕາ 3. ຂອບເຂດການນຳໃຊ້**

ລະບຽບສະບັບນີ້ນຳໃຊ້ຕໍ່ອົງການຄຸ້ມຄອງຂອງລັດ ແລະຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດໃຫ້ກູ້ຢືມທຶນຈາກລັດຖະບານເພື່ອເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດຕາມທີ່ໄດ້ລະບຸໄວ້ໃນແຈ້ງການສະບັບເລກທີ 1093/ຄລບ, ລົງວັນທີ 24/06/2009.

## ໝວດທີ II
## ມາດຖານເງື່ອນໄຂ ຂອງຜູ້ທີ່ໄດ້ຮັບອະນຸມັດໃຫ້ກູ້ຢືມທຶນເງິນກູ້

**ມາດຕາ 4. ມາດຖານເງື່ອນໄຂ**

ຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸມັດໃຫ້ສ້າງຄັງແຮເຂົ້າເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ ມີສິດກູ້ຢືມທຶນເງິນກູ້ ເພື່ອມາດຳເນີນທຸລະກິດໄດ້ ບົນມາດຖານເງື່ອນໄຂດັ່ງນີ້:

**4.1 ມາດຖານພື້ນຖານໂຄງລ່າງ ແລະເງື່ອນໄຂ**

- ມີສະຖານທີ່ກວ້າງຂວາງ, ບໍ່ມີຜົນກະທົບຕໍ່ຊຸມຊົນ ແລະສິ່ງແວດລ້ອມ;
- ມີໂຮງສີເຂົ້າທີ່ທັນສະໄໝ ສາມາດຜະລິດເຂົ້າໄດ້ 20 ໂຕນ/ວັນ ຂຶ້ນໄປ;
- ມີສາງເກັບມ້ຽນ/ຮັກສາເຂົ້າ ບໍ່ຫຼຸດ 2,000 ໂຕນ (ເຂົ້າເປືອກ), ມີລະບົບຖ່າຍເທອາກາດຖືກຕ້ອງຕາມຫຼັກວິຊາການ;
- ມີລະບົບ ຄົ່ງນ-ຖ່າຍ ເຂົ້າໄດ້ສະດວກ;
- ມີໂຮງອົບເຂົ້າທີ່ໄດ້ມາດຖານ;
- ມີລານຕາກເຂົ້າຖືກຕ້ອງຕາມຫຼັກວິຊາການ (ກວ້າງຂວາງ, ປູດ້ວຍຊີມັງ ແລະມີລະບົບລະບາຍນ້ຳໄດ້ວ່ອງໄວ);
- ມີລະບົບຮັກສາຄວາມປອດໄພດີ;
- ຜູ້ທີ່ເຮັດທຸລະກິດຄັງແຮເຂົ້າຂອງລັດຖະບານ ຕ້ອງມີເງື່ອນໄຂດັ່ງນີ້ :

  + ມີປະສົບການໃນການດຳເນີນທຸລະກິດ ຊື້- ຂາຍເຂົ້າມາແລ້ວຢ່າງ ໜ້ອຍ 05 ປີ ຂຶ້ນໄປ;

  + ມີຄວາມຮູ້ ແລະປະສົບການດ້ານກະສິກຳ ຫຼື ໂຮງສີເຂົ້າ, ຖ້າບໍ່ມີກໍ່ຕ້ອງຈ້າງວິຊາການມາຊ່ວຍ (ຜູກພັນສອງສົ້ນກັບຊາວກະສິກອນ, ປັບປຸງຄຸນນະພາບເຂົ້າດ້ວຍການຄັດເລືອກແນວພັນ ແລະອື່ນໆ).

  + ເປັນສະມາຊິກສະມາຄົມ ຫຼືກຸ່ມໂຮງສີເຂົ້າ.

  + ເປັນຫົວໜ່ວຍທຸລະກິດທີ່ສັງຄົມ ແລະການຈັດຕັ້ງເຊື່ອຖື ຫຼືຖືກຢັ້ງຢືນ ແລະຮັບຮອງເອົາຈາກອຳນາດການປົກຄອງແຂວງ ໃຫ້ດຳເນີນວຽກງານຄັງແຮເຂົ້າຂອງແຂວງ ດັ່ງກ່າວ.

  + ນອກຈາກທີ່ກ່າວມາຂ້າງເທິງນີ້ແລ້ວ, ຫົວໜ່ວຍທຸລະກິດຕ້ອງມີຄຸນສົມບັດ ແລະຈັນຍາບັນ ໃນການດຳເນີນທຸລະກິດນີ້.

**4.2 ຖານະການເງິນ**

- ຕ້ອງຖືບັນຊີ ຕາມກົດໝາຍບັນຊີ;
- ມີຖານະການເງິນໝັ້ນຄົງ ແລະໂປ່ງໃສ;

- ມີບັນຊີຊັບສິນ-ໜີ້ສິນລະອຽດ.

4.3 **ແຜນດຳເນີນການ**

- ຕ້ອງສ້າງແຜນນຳໃຊ້ທຶນເງິນກູ້;
- ຕ້ອງສ້າງແຜນການຊຳລະໜີ້ເງິນກູ້ (ຕົ້ນທຶນ ແລະດອກເບ້ຍ).

## ໝວດທີ III
## ການບໍລິຫານ ແລະຄຸ້ມຄອງທຶນເງິນກູ້

### ມາດຕາ 5. ການບໍລິຫານທຶນເງິນກູ້

5.1 ລັດຈະສົ່ງເສີມໃຫ້ກູ້ຢືມເງິນຈາກລັດຖະບານ ໃນບ້ວງເກັບຊື້ເຂົ້າເພື່ອແຮແຊກແຊງລາຄາ ແລະດັດສົມຕະຫຼາດດ້ວຍອັດຕາດອກເບ້ຍ 5% ຕໍ່ປີ;

5.2 ໄລຍະກູ້ຢືມທຶນ ແມ່ນ 01-02 ປີ;

5.3 ລະດັບວົງເງິນກູ້ຢືມແມ່ນອີງຕາມຄວາມສາມາດ ແລະຕາມແຜນການເກັບຊື້ເຂົ້າຕົວຈິງ ຂອງແຕ່ລະຫົວໜ່ວຍ;

5.4 ການເບີກຈ່າຍເງິນຕົວຈິງແມ່ນຈະອີງໃສ່ແຜນການເກັບຊື້ເຂົ້າໃນແຕ່ລະໄລຍະ ໝາຍວ່າຜູ້ກູ້ຢືມຈະບໍ່ສາມາດຖອນເງິນອອກໄດ້ໝົດບາດດຽວ, ຖອນຕາມແຜນການເກັບຊື້ເຂົ້າຕົວຈິງ;

5.5 ກ່ອນຈະເກັບຊື້ເຂົ້າທຸກໆຄັ້ງ ຜູ້ທີ່ໄດ້ຮັບອະນຸຍາດຕ້ອງສ້າງແຜນເກັບຊື້ເຂົ້າລະອຽດ ເຊັ່ນ: ຈະເກັບຊື້ຢູ່ເຂດໃດ, ຈຳນວນເທົ່າໃດ ແລະແມ່ນໃຜຈະເປັນຜູ້ສະໜອງໃຫ້ ( ໃສ່ລາຍຊື່ ແລະທີ່ຢູ່ພ້ອມເບີໂທລະສັບຂອງຜູ້ທີ່ຈະສະໜອງເຂົ້າດັ່ງກ່າວໃຫ້ລະອຽດ ) ເພື່ອຢັ້ງຢືນ ແລະຈະໃຊ້ເປັນເອກະສານປະກອບໃນການຂໍຖອນເງິນ.

### ມາດຕາ 6. ການຄຸ້ມຄອງທຶນເງິນກູ້

ເພື່ອບັນລຸຕາມເປົ້າໝາຍທີ່ລັດຖະບານມອບໝາຍໃຫ້ໃນແຕ່ລະໄລຍະ ທຸກພາກສ່ວນທີ່ມີສ່ວນຮ່ວມຕ້ອງປະຕິບັດຄື:

6.1 ກະຊວງ ອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ):

- ປະສານກັບ ກະຊວງ ກະສິກຳ ແລະປ່າໄມ້ ເພື່ອເອົາຂໍ້ມູນຕົ້ນທຶນການຜະລິດ (ໂຄງສ້າງລາຄາຕົ້ນທຶນການຜະລິດ) ເພື່ອເປັນບ່ອນອີງ ໃນການກຳນົດລາຄາເກັບຊື້;
- ກຳນົດລາຄາເກັບຊື້ເຂົ້າໃຫ້ແກ່ຜູ້ເຮັດຄັງແຮໃນແຕ່ລະໄລຍະ ເພື່ອຮັບປະກັນບໍ່ໃຫ້ຊາວນາຫຼຸບທຶນ ຫຼືຖືກເອົາລັດເອົາປຽບ ພ້ອມທັງກຳນົດລາຄາຂາຍໃຫ້ແກ່ຜູ້ເຮັດຄັງແຮ, ຮັບປະກັນທັງສອງສົ້ນ ຜູ້ຜະລິດບໍ່ໃຫ້ຫຼຸບທຶນ, ຫົວໜ່ວຍທຸລະກິດກໍໄດ້ກຳໄລສົມເຫດສົມຜົນ ແລະສັງຄົມກໍໄດ້ຮັບຜົນປະໂຫຍດ;
- ກຳນົດໂຄງສ້າງລາຄາຈຳໜ່າຍເຂົ້າແຮແຊກແຊງລາຄາ ຕາມທິດຊີ້ນຳຂອງຂັ້ນເທິງໃນແຕ່ໄລຍະ;
- ເຮັດສັນຍາຜູກພັນກັບຫົວໜ່ວຍທຸລະກິດ ທີ່ຖືກອະນຸມັດໃຫ້ກູ້ຢືມທຶນຢ່າງຮັດກຸມ ເພື່ອຮັບປະກັນການນຳໃຊ້ແຫຼ່ງທຶນເງິນກູ້ໃຫ້ຖືກເປົ້າໝາຍ ແລະມີປະສິດທິຜົນ;

- ສະເໜີ, ລາຍງານ, ຂໍທິດຊີ້ນຳຈາກລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານສາງແຮເຂົ້າ ເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ ເປັນປະຈຳ.
- ຊີ້ນຳ ບັນດາພະແນກ ອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ເພື່ອເປັນເຈົ້າການ ໃນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດຕົວຈິງ ຂອງຫົວໜ່ວຍທຸລະກິດທີ່ເຮັດສາງແຮເຂົ້າ ຢູ່ທ້ອງຖິ່ນທີ່ກ່ຽວຂ້ອງ.
- ຊີ້ນຳການຈັດຕັ້ງປະຕິບັດໃຫ້ແກ່ຜູ້ປະກອບການດັ່ງກ່າວ ໃນການເກັບຊື້ ແລະແຊກແຊງລາຄາ ຕາມທິດຊີ້ນຳຂອງລັດຖະບານໃນແຕ່ລະໄລຍະ ຫຼືໃນຊ່ວງໄລຍະທີ່ລາຄາເຂົ້າສູງຂຶ້ນ ເປັນຕົ້ນ ແມ່ນຢູ່ໃນລະຫວ່າງເດືອນມິຖຸນາ ເຖິງກັນຍາຂອງທຸກໆປີ ຫຼືໃນໄລຍະທີ່ລາຄາເກັບຊື້ເຂົ້າຫາກ ຫຼຸດລົງ ຕາມລາຄາທີ່ລັດຊີ້ນຳ;
- ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຂອງຜູ້ປະກອບການຢ່າງເປັນລະບົບ (ເດືອນ, ງວດ ແລະ ປີ).
- ໄລ່ລຽງສ່ວນຜິດດ່ຽງລາຄາ ລະຫວ່າງລາຄາທີ່ລັດກຳນົດໃຫ້ ແລະລາຄາທີ່ລັດອະນຸມັດໃຫ້ຂາຍ ແຊກແຊງຕົວຈິງ ໃນແຕ່ລະໄລຍະ.

  + ໃນກໍລະນີ ລາຄາທີ່ລັດກຳນົດໃຫ້ຂາຍແຊກແຊງ ຫາກສູງກວ່າລາຄາ ທີ່ໄດ້ໄລ່ລຽງຄ່າຕ່າງໆ ຂອງສ່ວນປະກອບ ລວມທັງກຳໄລໃສ່ແລ້ວ, ຕ້ອງແຈ້ງໃຫ້ຫົວໜ່ວຍທີ່ເຮັດສາງແຮ ມອບຕົວເລກ ຜິດດ່ຽງນັ້ນ ຄືນໃຫ້ລັດຕາມຈຳນວນ ແລະຕາມກຳນົດເວລາ;

  + ຕ້ອງແຈ້ງ ແລະຖົມຊົດເຊີຍຄືນໃຫ້ຫົວໜ່ວຍທີ່ເຮັດສາງແຮ ຕາມຕົວເລກຜິດດ່ຽງ, ໃນກໍລະນີລາຄາ ທີ່ລັດກຳນົດໃຫ້ຂາຍແຊກແຊງ ຫາກຕ່ຳກວ່າລາຄາ ທີ່ໄດ້ໄລ່ລຽງຄ່າຕ່າງໆ ຂອງສ່ວນປະກອບ ລວມທັງກຳໄລໃສ່ແລ້ວ.

6.2 ຫົວໜ່ວຍທຸລະກິດທີ່ເຮັດສາງແຮເຂົ້າ:

- ປະຕິບັດຕາມສັນຍາ ທີ່ຕົນໄດ້ເຊັນໄວ້ກັບ ກະຊວງ ອຸດສາຫະກຳ ແລະການຄ້າ (ກົມການຄ້າ ພາຍໃນ) ຢ່າງເຂັ້ມງວດ;
- ຄົ້ນຄວ້າ, ຊອກຫາແຫຼ່ງເກັບຊື້ເຂົ້າໃຫ້ໄດ້ ຕາມຈຳນວນທີ່ລັດຖະບານ ກໍຄືກະຊວງອຸດສາຫະກຳ ແລະການຄ້າມອບໝາຍຕົວເລກໃຫ້ໃນແຕ່ລະໄລຍະ ຫຼືຕາມແຜນການເກັບຊື້ຂອງແຕ່ລະທ້ອງ ຖິ່ນ;
- ຮັບປະກັນໃຫ້ມີເຂົ້າແຮໄວ້ຢູ່ໃນສາງຂອງຕົນຄົບຕາມຈຳນວນ ຕາມທີ່ລະບຸໄວ້ໃນສັນຍາ ຫຼືຕາມ ທຶນເງິນກູ້ທີ່ລັດປ່ອຍໃຫ້ຕົວຈິງ;
- ປະສານສົມທົບກັບພະແນກອຸດສາຫະກຳ ແລະການຄ້າ, ພະແນກກະສິກຳ ແລະປ່າໄມ້, ພ້ອມ ທັງອຳນາດການປົກຄອງທ້ອງຖິ່ນ ເພື່ອເອົາຂໍ້ມູນ ແລະສະເໜີເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດໃຫ້ໄດ້ຄົບຕາມຈຳນວນ;
- ດຳເນີນການເຄື່ອນໄຫວທຸລະກິດເປັນປົກກະຕິ ເພື່ອສ້າງລາຍຮັບ ແລະທັງໝູນວຽນຄ່ຽນຖ່າຍ ເຂົ້າຢູ່ໃນສາງເປັນປະຈຳ ເພື່ອຮັບໃຊ້ສັງຄົມໃນຈຳນວນ 20% ຂອງຈຳນວນທຶນເງິນກູ້ ຫຼືຕາມຈຳ ນວນເຂົ້າທີ່ໄດ້ຮັບອະນຸຍາດທັງໝົດ; ແຕ່ຕ້ອງຮັບປະກັນໃຫ້ມີເຂົ້າແຮໄວ້ຢູ່ໃນສາງ ຕາມຈຳນວນ 80% ຂອງຈຳນວນທຶນເງິນກູ້ ຫຼືຕາມຈຳນວນເຂົ້າທີ່ໄດ້ຮັບອະນຸຍາດທັງໝົດ;

- ປະຕິບັດລະບຽບການທີ່ກ່ຽວຂ້ອງ ແລະພັນທະຂອງຕົນຕໍ່ລັດ-ສັງຄົມ ຕາມການຊີ້ນຳຂອງລັດຖະບານໃນແຕ່ລະໄລຍະຢ່າງເຂັ້ມງວດ;
- ປະຕິບັດການລາຍງານ ກ່ຽວກັບປະລິມານເຂົ້າທີ່ເກັບຊື້ໄດ້, ລາຄາເກັບຊື້ຕົວຈິງໃນແຕ່ລະໄລຍະຂອງແຕ່ລະລະດູການ ແລະຕົວເລກເຄື່ອນໄຫວ (ປົກກະຕິ ແລະໃນເວລາລັດໃຫ້ແຊກແຊງ) ໃຫ້ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ເປັນລະບົບ.

## ໝວດທີ IV
## ຂັ້ນຕອນໃນການກູ້ຢືມທຶນເງິນກູ້

### ມາດຕາ 7. ຂັ້ນຕອນດ້ານເອກະສານ

ຫົວໜ່ວຍທຸລະກິດທີ່ໄດ້ຮັບອະນຸຍາດເຮັດຄັງແຮເຂົ້າດັ່ງກ່າວ ຕ້ອງປະກອບເອກະສານໂດຍຜ່ານພະແນກ ອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ແລ້ວຍື່ນຕໍ່ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ), ຊຶ່ງເອກະສານທີ່ກ່ຽວຂ້ອງດັ່ງກ່າວນັ້ນ ໄດ້ລະບຸໄວ້ຢູ່ ມາດຕາ 4, ຂໍ້ 4.1, ຂໍ້ 4.2 ແລະຂໍ້ 4.3 ໃນລະບຽບສະບັບນີ້.

### ມາດຕາ 8. ຂັ້ນຕອນການພິຈາລະນາແຫຼ່ງທຶນເງິນກູ້

ກະຊວງ ອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ), ພາຍຫຼັງທີ່ໄດ້ຮັບເອກະສານຈາກຫົວໜ່ວຍທຸລະກິດແລ້ວ ດຳເນີນການດັ່ງນີ້:

8.1 ຕ້ອງພິຈາລະນາ ແລະຢັ້ງຢືນຄວາມຖືກຕ້ອງ, ແລ້ວນຳສະເໜີຕໍ່ ກະຊວງການເງິນ ເພື່ອພິຈາລະນາອອກໜັງສືຄ້ຳປະກັນເງິນກູ້ໃຫ້;

8.2 ສົມທົບກັບກະຊວງ ການເງິນ ເພື່ອຕິດຕາມການອອກໜັງສືຄ້ຳປະກັນເງິນກູ້, ຫຼັງຈາກນັ້ນ ຈຶ່ງນຳເອົາໜັງສືຄ້ຳປະກັນດັ່ງກ່າວໄປກູ້ເງິນຈາກທະນາຄານ;

8.3 ໃນກໍລະນີທີ່ຫົວໜ່ວຍທຸລະກິດ ຫາກມີໜັງສືຄ້ຳປະກັນຈາກທະນາຄານໃດໜຶ່ງແລ້ວ, ບໍ່ຈຳເປັນຕ້ອງນຳສະເໜີຕໍ່ກະຊວງການເງິນອີກ, ແຕ່ສະເໜີຕໍ່ທະນາຄານແຫ່ງ ສປປ ລາວ ໂດຍກົງ, ເພື່ອພາກສ່ວນດັ່ງກ່າວ ຈະໄດ້ພິຈາລະນາອະນຸມັດເງິນກູ້ໃຫ້.

8.4 ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ເປັນຜູ້ເຊັນສັນຍາກູ້ຢືມທຶນຈາກທະນາຄານແຫ່ງ ສປປ ລາວ (ກົມບໍລິການ) ໂດຍກົງ ແລ້ວປ່ອຍຕໍ່ໃຫ້ຫົວໜ່ວຍທຸລະກິດໃນເປົ້າໝາຍທີ່ມີເງື່ອນໄຂຕາມມາດຕາ 4 ຂ້າງເທິງນີ້;

8.5 ການຖອນເງິນກູ້ແຕ່ລະຄັ້ງ ແມ່ນອີງຕາມແຜນດຳເນີນການ ຂອງຫົວໜ່ວຍທຸລະກິດໃນແຕ່ລະໄລຍະ, ໂດຍຜ່ານການຢັ້ງຢືນຈາກກະຊວງອຸດສາຫະກຳ ແລະການຄ້າ, ບົນພື້ນຖານການລາຍງານຂອງພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ໃນແຕ່ລະຄັ້ງ ; ທະນາຄານຈຶ່ງຈະອະນຸຍາດໃຫ້ຖອນເງິນໄດ້ ແຕ່ຫ້າມບໍ່ໃຫ້ຖອນເງິນອອກໝົດບາດດຽວ ຈົນກວ່າຈະໄດ້ຮັບການກວດກາ ແລະຢັ້ງຢືນຜົນການຈັດຕັ້ງປະຕິບັດໃນງວດທີ່ຜ່ານມາ ຈາກພາກສ່ວນທີ່ກ່ຽວຂ້ອງ (ການຄ້າ, ການເງິນ ແລະທະນາຄານ ຫຼືການຄ້າ ແລະທະນາຄານ).

# ໝວດທີ V
# ການປະຕິບັດພັນທະ, ນະໂຍບາຍ ແລະມາດຕະການ

## ມາດຕາ 9. ພັນທະຂອງຫົວໜ່ວຍທຸລະກິດ

ຫົວໜ່ວຍທຸລະກິດທີ່ໄດ້ຮັບອະນຸມັດໃຫ້ກູ້ຢືມທຶນ ເພື່ອເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດ ມີພັນທະຕໍ່ລັດດັ່ງນີ້ :

9.1 ຂຶ້ນແຜນການເຄື່ອນໄຫວຂອງຕົນ ໂດຍຜ່ານພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ແລ້ວນຳສະເໜີແຜນດັ່ງກ່າວຕໍ່ກະຊວງອຸດສາຫະກຳ ແລະການຄ້າ ( ກົມການຄ້າພາຍໃນ ), ເປັນແຕ່ລະເດືອນ, ງວດ ແລະປີ;

9.2 ແຈ້ງລາຄາຕົ້ນທຶນການຜະລິດ-ເກັບຊື້ ຕໍ່ກະຊວງອຸດສາຫະກຳ ແລະການຄ້າ(ກົມການຄ້າພາຍໃນ) ແລະພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ເປັນແຕ່ລະເດືອນ ຫຼືແຕ່ລະໄລຍະ, ແຕ່ລະງວດ ຫຼືປີ ເພື່ອຕິດຕາມ, ຢັ້ງຢືນ ແລະກຳນົດລາຄາຂາຍ ໃຫ້ເໝາະສົມ ແລະທັນເວລາໃນຍາມຈຳເປັນ;

9.3 ເວລາຈຳໜ່າຍເພື່ອແຊກແຊງລາຄາຕ້ອງປະຕິບັດຕາມທິດຊີ້ນຳ ແລະຕາມກົນໄກລາຄາທີ່ຂັ້ນເທິງໄດ້ອະນຸມັດໃນແຕ່ລະໄລຍະຢ່າງເຄັ່ງຄັດ ບໍ່ວ່າລາຄາຂາຍຍົກ ກໍຄືລາຄາຂາຍຍ່ອຍ ແລະຕ້ອງມີຈຸດຈຳໜ່າຍເຂົ້າແຮແຊກແຊງ ເພື່ອຮັບປະກັນການຈຳໜ່າຍໃຫ້ສັງຄົມໄດ້ເຂົ້າເຖິງຄັງແຮເຂົ້າດັ່ງກ່າວ.

9.4 ຕ້ອງປະຕິບັດພັນທະຂອງຕົນຕໍ່ລັດຢ່າງເຄັ່ງຄັດ ໃນກໍລະນີທີ່ມີຕົວເລກຜິດດ່ຽງລາຄາ ລະຫວ່າງລາຄາທີ່ລັດກຳນົດໃຫ້ ແລະລາຄາທີ່ລັດອະນຸມັດໃຫ້ຂາຍແຊກແຊງຕົວຈິງໃນແຕ່ລະໄລຍະ; ໂດຍຕົວເລກຜິດດ່ຽງດັ່ງກ່າວນັ້ນຕ້ອງມອບຄືນໃຫ້ລັດ ຕາມກຳນົດເວລາ ທີ່ລະບຸໄວ້ໃນແຈ້ງການທີ່ອອກໃຫ້ໃນແຕ່ລະຄັ້ງ.

9.5 ຕ້ອງຮັບຜິດຊອບຕໍ່ການຊຳລະສະສາງທັງຕົ້ນທຶນ ແລະດອກເບ້ຍ ຕາມກຳນົດເວລາທີ່ຕົນໄດ້ເຊັນສັນຍາໄວ້ ກັບກະຊວງ ອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ຢ່າງເຄັ່ງຄັດ;

9.6 ຕ້ອງຮັບຜິດຊອບພັນທະຂອງຕົນຕໍ່ລັດ ຕາມລະບຽບການຂອງການເງິນວາງອອກ;

9.7 ຕ້ອງປະຕິບັດລະບອບການລາຍງານ ກ່ຽວກັບການເຄື່ອນໄຫວຂອງຕົນ ພ້ອມທັງສະຫຼຸບຕົວເລກການເຄື່ອນໄຫວຕໍ່ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ແລະພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ຢ່າງເປັນລະບົບ;

9.8 ຕ້ອງມີເຂົ້າແຮໄວ້ຢູ່ໃນສາງບໍ່ໃຫ້ຫຼຸດ 80% ຂອງຈຳນວນເຂົ້າທັງໝົດ ທີ່ໄດ້ຮັບອະນຸຍາດ;

9.9 ຕ້ອງໝູນວຽນຄ່ຽນຖ່າຍເຂົ້າໃນສາງຂອງຕົນປົກກະຕິ ໃນອັດຕາສ່ວນ 20% ຂອງຈຳນວນເຂົ້າແຮທັງໝົດທີ່ໄດ້ຮັບອະນຸຍາດ; ການປະຕິບັດດັ່ງກ່າວຕ້ອງເຮັດເປັນລະບົບ ເພື່ອຮັບປະກັນບໍ່ໃຫ້ເຂົ້າເຊື່ອມຄຸນນະພາບ ແລະບົກແຫ້ງເກີນອັດຕາທີ່ກຳນົດ.

9.10 ຕ້ອງໃຫ້ຄວາມຮ່ວມມືທີ່ດີ ແລະອຳນວຍຄວາມສະດວກ ແກ່ໜ່ວຍງານທີ່ກ່ຽວຂ້ອງຂອງລັດ ໃນເວລາລົງກວດກາ ການນຳໃຊ້ທຶນເງິນກູ້ດັ່ງກ່າວ;

9.11 ຕ້ອງກຽມພ້ອມສະໜອງເຂົ້າໃຫ້ລັດຖະບານຕະຫລອດເວລາ ໂດຍສະເພາະແມ່ນໄລຍະສຸກເສີນແມ່ນໃຫ້ປະຕິບັດຕາມຄຳສັ່ງຂອງຂັ້ນເທິງຢ່າງເຄັ່ງຄັດ.

**ມາດຕາ 10. ການປະຕິບັດນະໂຍບາຍ ຕໍ່ຫົວໜ່ວຍທຸລະກິດທີ່ມີຜົນງານດີເດັ່ນ**

ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວໄດ້ດີ, ມີປະສິດທິຜົນ, ປະຕິບັດຕາມລະບຽບການ ແລະສັນຍາຢ່າງເຄັ່ງຄັດ ຈະໄດ້ຮັບການຊຸກຍູ້ ແລະສົ່ງເສີມຈາກລັດ ເຊັ່ນ : ສະເໜີຕໍ່ລັດຖະບານ ໃຫ້ໄດ້ຮັບການຍ້ອງຍໍເປັນຫົວໜ່ວຍທຸລະກິດທີ່ດີເດັ່ນປະຈຳປີ ຫຼືເປັນຕົວແບບແຫ່ງຊາດ; ພ້ອມທັງຈະໄດ້ຮັບບູລິມະສິດໃຫ້ນຳໜ້າພາທາງ ແລະດຳເນີນກິດຈະການດັ່ງກ່າວຕໍ່ໄປ, ນອກນັ້ນ ຍັງຈະໄດ້ຮັບນະໂຍບາຍອື່ນອີກຈາກລັດຕາມຄວາມເໝາະສົມ.

**ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ**

ຖ້າຫົວໜ່ວຍທຸລະກິດໃດ ຫາກລະເມີດຝ່າຝືນລະບຽບການສະບັບນີ້ ແລະສັນຍາທີ່ໄດ້ເຊັນໄວ້ກັບກະຊວງ ອຸດສາຫະກຳ ແລະການຄ້າ(ກົມການຄ້າພາຍໃນ) ຈະຖືກປະຕິບັດຕາມແຕ່ລະກໍລະນີດັ່ງນີ້:

11.1 ກໍລະນີ ບໍ່ຊຳລະຕົ້ນທຶນ ແລະດອກເບັ້ຍ ຕາມທີ່ໄດ້ລະບຸໄວ້ໃນສັນຍາທຶນເງິນກູ້, ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ມີສິດເລັ່ງທວງໃຫ້ຊຳລະໂດຍໄວ ແລະຫົວໜ່ວຍທຸລະກິດນັ້ນຕ້ອງຖືກປະຕິບັດມາດຕະການດັ່ງນີ້ :

- ຄັ້ງທີ ໜຶ່ງ ຖືກຕັກເຕືອນ ແລະປັບໃໝ 50% ຂອງອັດຕາດອກເບັ້ຍ;
- ຄັ້ງທີ່ ສອງ ຖືກປັບໃໝ 100% ;
- ຄັ້ງທີ ສາມ ໃຫ້ຢຸດຕິການດຳເນີນກິດຈະການ ແລະຖືກດຳເນີນຄະດີຕາມຂະບວນການຍຸດຕິທຳ.

11.2 ກໍລະນີຫາກລະເມີດຕໍ່ລະບຽບການສະບັບນີ້ເວົ້າລວມ ເຊັ່ນ: ນຳໃຊ້ທຶນເງິນກູ້ບໍ່ຖືກເປົ້າໝາຍ, ຫລີບຫຼີກ ແລະບໍ່ໃຫ້ຄວາມຮ່ວມມືໃນການກວດກາຂອງເຈົ້າໜ້າທີ່, ປິດບັງຄວາມຈິງ ອັນເປັນສາເຫດເຮັດໃຫ້ແກ່ຍາວກຳນົດເວລາ ແລະບິດເບືອນການຊຳລະໜີ້ສິນ ໃຫ້ແກ່ຜູ້ໃຫ້ກູ້ ຫຼືຫຼີບຫຼີກບິດເບືອນ ເພື່ອແກ່ຍາວເວລາການມອບພັນທະໃຫ້ລັດໃນທຸກກໍລະນີ ; ຜູ້ກູ້ຢືມ ຈະຖືກປະຕິບັດມາດຕະການ ແລະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

- ກະຊວງ ອຸດສາຫະກຳ ແລະການຄ້າ, ກົມການຄ້າພາຍໃນ (ຜູ້ໃຫ້ກູ້) ມີສິດງົດການອອກເງິນກູ້ໃນງວດຕໍ່ໄປ ແລະ ເລັ່ງທວງໜີ້ສິນກ່ອນກຳນົດສັນຍາໄດ້;
- ກະຊວງ ອຸດສາຫະກຳ ແລະການຄ້າ, ກົມການຄ້າພາຍໃນ (ຜູ້ໃຫ້ກູ້) ມີສິດຮຽກເກັບເງິນກູ້ຄືນທັງໝົດ ນັບທັງຕົ້ນທຶນ ແລະດອກເບັ້ຍ ຫຼືຢຶດຊັບຕ່າງໆໂດຍທັນທີ ຈາກຫົວໜ່ວຍທຸລະກິດນັ້ນ;
- ກະຊວງ ອຸດສາຫະກຳ ແລະການຄ້າ, ກົມການຄ້າພາຍໃນ (ຜູ້ໃຫ້ກູ້) ຈະສະເໜີຕໍ່ລັດຖະບານ ເພື່ອລຶບຊື່ອອກຈາກການດຳເນີນທຸລະກິດໃນບ້ວງດັ່ງກ່າວ ແລະຈະຖືກລະບຸຊື່ໃຫ້ເປັນຫົວໜ່ວຍທຸລະກິດທີ່ບໍ່ມີຄວາມຈິງໃຈ ຕໍ່ພັກ-ລັດ ແລະການຈັດຕັ້ງ ໃນການເຄື່ອນໄຫວທຸລະກິດ ຢູ່ໃນສະຖາບັນການເງິນຕ່າງໆ.

11.3 ກໍລະນີ ບໍ່ປະຕິບັດ ຫຼືລະເມີດມາດຕາໃດມາດຕາໜຶ່ງ ຫຼືຂໍ້ໃດຂໍ້ໜຶ່ງ ໃນລະບຽບສະບັບນີ້ ຫົວໜ່ວຍທຸລະກິດດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ການເສຍຫາຍທີ່ເກີດຂຶ້ນ ແລະຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍທັງໝົດ ທີ່ເກີດຂຶ້ນ ເຊັ່ນ: ຄ່າໃຊ້ຈ່າຍໃນການດຳເນີນຄະດີ ແລະອື່ນໆ.

11.4 ກໍລະນີ ບໍ່ປະຕິບັດການເກັບຊື້ ແລະການຂາຍ ຕາມລາຄາຊີ້ນຳ ເຊັ່ນ : ຖ້າກວດພົບວ່າມີການເກັບຊື້ເຂົ້າ

ຈາກຊາວນາໃນລາຄາທີ່ເອົາປຽບ, ມີການຂາຍເກັງກຳໄລທີ່ບໍ່ເປັນທຳ ຫຼືມີການສ້າງສະຖານະການບິດເບືອນຕ່າງໆ ທີ່ເຮັດໃຫ້ສະພາບ ແລະລາຄາເຂົ້າປັ່ນປ່ວນ ຈະຖືກປະຕິບັດວິໄນຕາມທີ່ລະບຸໄວ້ໃນສັນຍາທີ່ກ່ຽວຂ້ອງ.

ນອກຈາກນັ້ນແລ້ວ ຍັງຈະຖືກປັບໃໝ ແລະໄດ້ຮັບໂທດ ຕາມທີ່ລະບຸໄວ້ໃນກົດໝາຍອາຍາສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 09 ພະຈິກ 2005 ໃນມາດຕາ 147, 148, 149 ແລະມາດຕາອື່ນໆ ຕາມຄວາມເໝາະສົມ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 12.** ຜ່ານການຈັດຕັ້ງປະຕິບັດ ລະບຽບສະບັບນີ້, ຫາກມີຄວາມຫຍຸ້ງຍາກ ແລະສະດວກແນວໃດ, ມອບໃຫ້ກົມການຄ້າພາຍໃນ ເປັນຜູ້ຮັບຜິດຊອບໃນການຕິດຕາມ, ກວດກາ, ສະຫຼຸບ ແລະລາຍງານຜົນການຈັດຕັ້ງປະຕິບັດລະບຽບສະບັບນີ້ຕໍ່ຂັ້ນເທິງ ເພື່ອຂໍທິດຊີ້ນຳໃນການສົ່ງເສີມ, ດຳເນີນມາດຕະການ ແລະແກ້ໄຂບັນຫາໃຫ້ທັນກັບສະພາບການ.

**ມາດຕາ 13.** ການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ແລະຫົວໜ່ວຍທຸລະກິດທີ່ຖືກອະນຸມັດ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14.** ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນຂໍ້ຕົກລົງສະບັບເລກທີ 1761 /ອຄ.ຄພນ. ລົງວັນທີ 03 ກັນຍາ 2009.

ລັດຖະມົນຕີວ່າການ
ກະຊວງ ອຸດສາຫະກຳ ແລະການຄ້າ,

ດຣ. ນາມ ວິຍະເກດ